ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 01 ຫາ 05 ພຶດສະພາ 2023



ປູກຜັກບົ່ວຂາຍ ສ້າງລາຍຮັບ 80-90 ລ້ານກີບ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ປູກຜັກບົ່ວຂາຍ ສ້າງລາຍຮັບ 80-90 ລ້ານກີບ

ທ່ານ ສົມໝາຍ ທອງບຸນແອງ ປະຊາຊົນ ບ້ານນ້ຳແຫ້ງນ, ເມືອງ ຫຼວງນ້ຳທາ, ແຂວງຫຼວງນ້ຳທາໄດ້ກ່າວວ່າ ຄອບຄົວແມ່ນໄດ້ຍຶດຖືການປູກຜັກຫອມບົ່ວເລື່ອຍ (ຫອມບົ່ວແບ່ງ) ເປັນເວລາ 15 ປີ ມາແລ້ວ ການເຮັດອາຊີບອື່ນກໍບໍ່ມີລາຍຮັບຄືກັບການປູກຫອມບົ່ວ, ຫອມບົ່ວ 12 ກິໂລກຼາມ ຂາຍໄດ້ 100.00 ກີບ. ພາຍຫຼັງທີ່ລຶຫອມບົ່ວຂາຍແລ້ວ ໄດ້ລຶກຫອມບົ່ວອອກຂາຍຕື່ມໃນກິໂລກຼາມລະ 25.000 ກີບ ເອົາໄປຂາຍໃນຕະຫຼາດ ແລະ ຈຳນວນນຶ່ງກໍ່ມີລູກຄ້າມາຊື້ຢູ່ກັບສວນ ໄດ້ມື້ລະ 30-40 ກິໂລກຼາມ (ໃບຫອມບົ່ວ), ຫອມບົ່ວລຶກທັງຫົວ 20 ກິໂລກຼາມ/ມື້ ການປູກຜັກຫອມບົ່ວຂາຍໄດ້ເຮັດໃຫ້ຄອບຄົວມີຢູ່ມີກິນ ແລະ ດີຂຶ້ນ.

ປີໜຶ່ງໄດ້ມີລາຍຮັບຈາກການຂາຍຜັກຫອມບົ່ວລະຫວ່າງ 80-90 ລ້ານກີບ/ປີ ສະມາຊິກໃນຄອບຄົວແມ່ນບໍ່ໄດ້ໄປເຮັດວຽກທາງສຸມໃສ່ປູກຜັກຫອມບົ່ວເປັນຫຼັກແລ້ວເອົາເງິນທີ່ໄດ້ມາໝູນໃຊ້ໃນຄອບຄົວ ແລະ ເປັນທຶນໝູນວຽນໃນການຜະລິດ.

ທ່ານ ສົມໝາຍ ທອງບຸນແອງ ໄດ້ກ່າວວ່າໃນແຕ່ກ່ອນຄອບຄົວແມ່ນມີຄວາມທຸກຍາກຫຼາຍສັງຄົມອ້ອມຂ້າງກໍບໍ່ຍອມຮັບໄປເປັນລູກຈ້າງໃນສວນເຂົາພໍໄດ້ເງິນມາຈຸນເຈືອຄອບຄົວ. ພາຍຫຼັງປູກຫອມບົ່ວແລ້ວສາມາດສ້າງລາຍຮັບສູ່ຄອບຄົວເຮັດໃຫ້ສັງຄົມຍອມຮັບໄປທາງໃດກໍມີແຕ່ຄົນນັບຖື ເພາະໄດ້ສ້າງຕົນເອງ ແລະ ມີຜົນສຳເລັດໃນລະດັບໜຶ່ງ.

ຈຸດເລີ່ມຕົ້ນຂອງການປູກຜັກຫອມບົ່ວ ທຳອິດແມ່ນຄົນເຖົ້າ ຄົນແກ່ ຢູ່ໃນບ້ານປູກກ່ອນໃນເນື້ອທີ່ນ້ອຍແລ້ວນຳເອົາໄປຂາຍຢູ່ຕະຫຼາດເມືອງ ໄດ້ຄັ້ງລະ 10-20 ກີບ ໃນສະໄໝນັ້ນ. ເນື່ອງຈາກເຮັດຢ່າງອື່ນບໍ່ເປັນແດ່ ທາງຄອບຄົວຈຶ່ງໄດ້ປຶກສາຫາລືກັນເພື່ອມາປູກຜັກຫອມບົ່ວແບ່ງ ເຫັນວ່າສາມາດສ້າງລາຍຮັບດີ ແລະ ປູກຜັກກາດພ້ອມກັນ. ຜັກກາດ 1



ໜານ ສາມາດຂາຍໄດ້ 1 ແສນກີບ/ໜານ. ສຳລັບຫອມບົ່ວ 1 ໜານ ສາມາດຂາຍໄດ້ 6-7 ແສນກີບ/ໜານ. ຫຼັງຈາກນັ້ນໄດ້ຕັດສິນໃຈຫັນໄປປູກຫອມບົ່ວຢ່າງດຽວບໍ່ປູກຜັກກາດປິ່ນ ເວລາໄປຕະຫຼາດຢາກກິນຫຍັງກໍນຳເອົາເງິນທີ່ໄດ້ຈາກການຂາຍຜັກຊື້ກິນແທນ.

ແຕ່ກ່ອນເຮືອນແມ່ນຢູ່ແຄມນ້ຳແຕ່ເກີດມີນ້ຳຖ້ວມຈຶ່ງໄດ້ຍ້າຍມາຕັ້ງເຮືອນຢູ່ເຂດທີ່ບໍ່ມີນ້ຳບໍ່ຖ້ວມ ແລ້ວເລີ່ມປູກຫອມບົ່ວ ຕອນນັ້ນເຮືອນຊານກໍ່ຍັງບໍ່ທັນໝັ້ນຄົງ, ພາຍຫຼັງມີລາຍຮັບຈາກການຂາຍຜັກຫອມບົ່ວຕໍ່ເນື່ອງແລ້ວ ຈຶ່ງໄດ້ປັວແປງ ປັບປຸງເຮືອນໄປເທື່ອລະນ້ອຍຈົນສຳເລັດ. ປັດຈຸບັນເນື່ອງຈາກມີລູກຫຼາຍຄົນ ຈຶ່ງໄດ້ປູກເຮືອນອີກຫຼັງໜຶ່ງໃຫ້ລູກຢູ່ພ້ອມທັງສືບຕໍ່ຫາເງິນໂດຍການປູກຜັກຫອມບົ່ວເພື່ອລ້ຽງຄອບຄົວ ແລະ ເກັບອອມໄວ້ໃຊ້ຈ່າຍໃນຍາມເຖົ້າແກ່ອີກຈຳນວນໜຶ່ງ.

ສຳລັບເນື້ອທີ່ປູກປັດຈຸບັນແມ່ນໄດ້ເຊົ່າປີລະ 6 ແສນກີບ ຫຼື ຖ້າເຈົ້າຂອງດິນຢາກໄດ້ເຂົ້າສານແມ່ນ ຊື້ເຂົ້າໃຫ້ຈຳນວນ 1 ໂຕນ ຕາມການຕົກລົງກັນ; ສ່ວນດ້ານແຮງງານແມ່ນສະມາຊິກໃນຄອບຄົວຊ່ວຍກັນ ພາຍຫຼັງລົກຫອມບົ່ວອອກໄປຂາຍແລ້ວແມ່ນໄດ້ສືບຕໍ່ຊຸດໜານ ແລ້ວປູກຜັກຕໍ່ເລີຍ ເພື່ອບໍ່ໃຫ້ໜານຜັກເປົ່າຫວ່າງ ຖ້າປະໄວ້ດິນແມ່ນ ການຂາຍຜັກຄັ້ງຕໍ່ໄປຈະໄດ້ຖ້າດົນ ຖ້າລົກຜັກອອກຂາຍພ້ອມກັນໝົດ ແລ້ວຈຶ່ງປູກ ຈະບໍ່ທັນຂາຍຜັກໃຫ້ແມ່ຄ້າ-ພໍ່ຄ້າ ທີ່ມາຊື້ເອົາຜັກຢູ່ສວນເພື່ອໄປຂາຍໃນຕະຫຼາດ.

ສຳລັບຕົນເອງແລ້ວການປູກຜັກຫອມບົ່ວແມ່ນມີຄວາມສະດວກ ເພາະວ່າໄດ້ນຳໃຊ້ຝຸ່ນຄອກຂີ້ເປັດ-ຂີ້ໄກ່ ໂດຍຮັບຊື້ມາຈາກປະຊາຊົນພາຍໃນບ້ານໃນກິໂລກຼາມລະ 28.000 ກີບ ຈາກນັ້ນໄດ້ນຳເອົາຝຸ່ນດັ່ງກ່າວນັ້ນໄປຕາກແຫ້ງ ແລະ ໝັກກ່ອນການນຳໃຊ້ ພາຍຫຼັງຊຸດໜານຜັກແລ້ວແມ່ນໃຊ້ຝຸ່ນ

ພ້ອມເມື່ອຕົ້ນຜັກຫອມບົວໃຫຍ່ກໍ່ເລີ່ມລິໃບຫອມບົວອອກຂາຍກ່ອນ ປະມານ 4-5 ຄັ້ງ ຈາກນັ້ນຈຶ່ງໄດ້ລົກຫອມບົວອອກໄປຂາຍ

ໃນທຸກໆຕອນແລງ ຄອບຄົວ ຈະພ້ອມກັນມາກະກຽມລິໃບຫອມບົວເພື່ອກຽມສົ່ງຂາຍ ໝັດຢ່າງລະອຽດເພື່ອລໍຖ້າ ແມ່ຄ້າປະຈຳມາຮັບເອົາ. ປັດຈຸບັນເນື້ອທີ່ບາງສວນທີ່ເຊົ່າໄປນັ້ນ ໄດ້ເຮັດນາແຊງຢູ່ ພາຍຫຼັງເກັບກ່ຽວເຂົ້ານາແຊງແລ້ວ ແມ່ນຈະໄດ້ຂະຫຍາຍເນື້ອທີ່ຕື່ມອີກ ເພາະວ່າຕະຫຼາດມີຄວາມຕ້ອງການຫຼາຍ.

ປັດຈຸບັນນີ້ຄອບຄົວແມ່ນບໍ່ໄດ້ເຮັດວຽກອື່ນຕື່ມເລີຍ ເນື່ອງຈາກສຸມໃສ່ແຕ່ການປູກຫອມບົວແບ່ງ ແລະ ເອົາໃຈໃສ່ໃນການບົວລະບັດຮັກສາ ເພາະວ່າການປູກຫອມບົວແບ່ງນັ້ນມັນໄດ້ສ້າງລາຍຮັບ ໃຫ້ຄອບຄົວດີຫຼາຍ, ຕະຫຼາດກໍ່ຕ້ອງການຫຼາຍ ແລະ ພໍ່ຄ້າແມ່ຄ້າທີ່ມາຊື້ໜ້າສວນແມ່ນບໍ່ໄດ້ຈຳກັດຈຳນວນຊື້.



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ຫອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສິມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;